# ALI-BASRIN

Generic name: Flibanserin Tablets
Brand Name: ALIFBASRIN
Composition:
Flibanserin........................................................100 mg
Indications:

- Flibanserin is used to treat premenopausal women with persistently low or absent sexual desire (Hypoactive Sexual Desire Disorder (HSDD).

Limitations of Use:

- Flibanserin is not indicated for the treatment of HSDD in postmenopausal women or in men.
- Flibanserin is not indicated to enhance sexual performance.

Dosage:

- Recommended dosage is 100 mg taken once daily at bedtime.
- Discontinue treatment after 8 weeks if no improvement.

Contraindications:

- Using concomitant moderate or strong CYP3A4 inhibitors.
- With hepatic impairment.
- Known hypersensitivity to Flibanserin or its components.

Warning:

- Alcohol should be strictly avoided while taking this medication as it may cause low blood pressure, dizziness, and fainting.
- Hypotension and Syncope with Flibanserin Alone: Patients with pre-syncope should immediately lie supine and promptly seek medical help if symptoms are not resolved.
- Central Nervous System (CNS) Depression (e.g., Somnolence, Sedation): Can occur with Flibanserin alone exacerbated by other CNS depressants, and in settings where flibanserin concentrations are increased.

Adverse Effects:

- dizziness, somnolence, nausea, fatigue, insomnia, and dry mouth.

Dosage form: Light red tablets, oval.
Expiry date: 48 months from the date of manufacture.
Packaging: 30 tablets/bottle.
Storage:

- Store at room temperature not exceeding 30℃.
- Please keep out of the reach of children.

Manufactured by:
Laos Alliance Pharmaceutical Group Factory
Saysettha Development Zone, Vientiane Capital, Lao PDR
Tel: +856-21-737 051
www.alliancepharmagroup.com

# ເອກະສານກຳກັບຢາ
# ALI-BASRIN

ຊື່ທົ່ວໄປ: Flibanserin Tablets
ຊື່ການຄ້າ: ALIFBASRIN
ສ່ວນປະກອບ:
Flibanserin.......................................................................100 mg
ຂໍ້ບົ່ງໃຊ້:
- Flibanserin ໃຊ້ສຳລັບການປິ່ນປົວເພດຍິງໄວກ່ອນໝົດປະຈຳເດືອນ ທີ່ມີພາວະຄວາມຕ້ອງການທາງເພດຫຼຸດລົງຢ່າງຕໍ່ເນື່ອງ ຫຼື ເກືອບບໍ່ມີເລີຍ (Hypoactive Sexual Desire Disorder (HSDD)

<u>ຂໍ້ຈຳກັດໃນການໃຊ້:</u>
- ບໍ່ແນະນຳໃຫ້ມີການນຳໃຊ້ຢາ Flibanserin ສຳລັບການປິ່ນປົວ ໃນເພດຍິງໄວໝົດປະຈຳເດືອນ ແລະ ເພດຊາຍ ທີ່ມີພາວະຄວາມຕ້ອງການທາງເພດຫຼຸດລົງ (Hypoactive Sexual Desire Disorder(HSDD)
- ບໍ່ແນະນຳໃຫ້ມີການນຳໃຊ້ຢາ Flibanserin ເພື່ອປະສິດທິພາບທາງເພດ.

ຂະໜາດ ແລະ ວິທີນຳໃຊ້:
- ປະລິມານທີ່ແນະນຳ: 100 mg, 1 ຄັ້ງ ຕໍ່ມື້ ກ່ອນນອນ;
- ຖ້າບໍ່ມີການປ່ຽນແປງໃດໆ, ແມ່ນໃຫ້ຢຸດການປິ່ນປົວ ຫຼັງຈາກໄດ້ 8 ອາທິດ.

ຂໍ້ຫ້າມໃຊ້:
- ກໍລະນີມີການນຳໃຊ້ຢາຕ້ານເອັນໄຊ Cytochrome P450 (CYP3A4) ໃນລະດັບປານກາງ ຫຼື ຮຸນແຮງ.
- ໃນຄົນເຈັບທີ່ມີໜ້າທີ່ການທຳງານຂອງຕັບຊຸດໂຊມ.
- ຄົນເຈັບທີ່ມີອາການແພ້ຕໍ່ຢາ Flibanserin ຫຼື ສ່ວນປະກອບຂອງຕົວຢາ.

ຄຳເຕືອນ:
- ຄວນຫຼີກລ້ຽງການດື່ມ ເຫຼົ້າ ຢ່າງເດັດຂາດໃນຂະນະທີ່ໃຊ້ຢານີ້ ເພາະອາດເຮັດໃຫ້ເກີດຄວາມດັນເລືອດຕ່ຳ, ວິນຫົວ, ແລະ ໝົດສະຕິໄດ້.
- <u>ໃນກໍລະນີເກີດ ຄວາມດັນເລືອດຕ່ຳ ແລະ ໝົດສະຕິ ຈາກການໃຊ້ຢາ</u> Flibanserin <u>ພຽງຢ່າງດຽວ:</u> ຖ້າຄົນເຈັບມີອາການ ໝົດສະຕິ ຄວນໃຫ້ຄົນເຈັບນອນຫງາຍທັນທີ ຖ້າອາການບໍ່ດີຂື້ນ ແມ່ນໃຫ້ນຳສົ່ງໄປພົບແພດໂດຍໄວ.
- <u>ອາການກົດປະສາດສ່ວນກາງ (ເຊັ່ນ ງ່ວງນອນ, ມຶນງົງ):</u> ອາດເກີດຂຶ້ນໄດ້ຈາກການໃຊ້ Flibanserin ພຽງຢ່າງດຽວ ແລະ ຈະຮຸນແຮງຂຶ້ນຖ້າໃຊ້ຮ່ວມກັບຢາທີ່ກົດປະສາດ CNS ໂຕອື່ນ ຫຼື ໃນກໍລະນີທີ່ມີລະດັບຂອງຢາເພີ່ມຂຶ້ນສູງ.

ຜົນຂ້າງຄຽງ:
- ວິນຫົວ, ງ່ວງນອນ, ປວດຮາກ, ອ່ອນເພຍ, ນອນບໍ່ຫຼັບ ແລະ ປາກແຫ້ງ.

ຮູບແບບຂອງຢາ: ຢາເມັດຮູບໄຂ່ສີແດງອ່ອນ.
ຂະໜາດບັນຈຸ: ບັນຈຸໃນກ່ອງ, 1 ກ່ອງມີ 30 ເມັດ.
ວັນໝົດອາຍຸ: 48 ເດືອນ ນັບຫຼັງຈາກວັນທີຜະລິດ.
ການເກັບຮັກສາ:
- ເກັບຮັກສາໄວ້ໃນອຸນຫະພູມຫ້ອງບໍ່ໃຫ້ເກີນ 30 °C.
- ເກັບຮັກສາໄວ້ໃຫ້ຫ່າງໄກຈາກມືເດັກ.

ຜະລິດໂດຍ:
ໂຮງງານຜະລິດຢາ ລາວພັນທະມິດ ຟາກມາ ກຣຸບ ຈຳກັດ
ສະຖານທີ່: ຕັ້ງຢູ່ເຂດ ພັດທະນາກວມລວມ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: +856-21-737 051
www.alliancepharmagroup.com